ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
======00000======

ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ
ກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ

ເລກທີ: 270/ກບຮຖ.ທຫລ
ນະຄອນຫຼວງວຽງຈັນ, ວັນທີ: 11 JUN 2014

# ແຈ້ງການ

**ເຖິງ:** - ບັນດາໜ່ວຍກຳມະບານຮາກຖານ ທຫລ
- ບັນດາໜ່ວຍສະຫະພັນແມ່ຍິງຮາກຖານ ທຫລ
- ບັນດາໜ່ວຍຊາວໜຸ່ມຮາກຖານ ທຫລ

**ເລື່ອງ:** ປຸກລະດົມສະມາຊິກ 3 ອົງການຈັດຕັ້ງ ປະກອບສ່ວນຊ່ວຍເຫຼືອຜູ້ປະສົບອັກຄີໄພຢູ່ແຂວງໄຊຍະບູລີ.

- ອີງຕາມ ແຈ້ງການຂອງຄະນະບໍລິຫານງານຊາວໜຸ່ມ ທຫລ ສະບັບເລກທີ 112/ຊໜ.ທຫລ, ລົງວັນທີ 06/06/2014.

ກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ ຕາງໜ້າໃຫ້ 3 ອົງການຈັດຕັ້ງ ຂໍແຈ້ງມາຍັງບັນດາໜ່ວຍຮາກຖານທີ່ຂຶ້ນກັບ 3 ອົງການຈັດຕັ້ງມະຫາຊົນ ທຫລ ໃຫ້ລະດົມສະມາຊິກຂອງຕົນ ປະກອບສ່ວນເຄື່ອງຊ່ວຍເຫຼືອຜູ້ປະສົບອັກຄີໄພຢູ່ເມືອງຊຽງຮ່ອນ-ຫົງສາ ແຂວງໄຊຍະບູລີ ເພື່ອເປັນການບັນເທົາທຸກໃຫ້ແກ່ຜູ້ປະສົບໄພດັ່ງກ່າວ. ສຳລັບເຄື່ອງຊ່ວຍເຫຼືອອາດຈະເປັນວັດຖຸເຄື່ອງໃຊ້, ຂອງກິນ ຫຼືເງິນຕາມຄວາມສະດວກ (ຜູ້ໜຶ່ງບໍ່ໃຫ້ຫຼຸດ **5000** ກີບ) ເພື່ອເປັນການສະ ແດງນ້ຳໃຈຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນຍາມປະສົບໄພ. (ພາຍຫຼັງລະດົມແລ້ວໃຫ້ສົ່ງມາການເງິນຂອງກຳມະບານຮາກຖານ ທຫລ **ສະຫາຍ ເຢຍລໍ່ ຮົງນຸ່** ກົມຄຸ້ມຄອງສະຖາບັນການເງິນ ໂທລະສັບ 254294). ພາຍໃນ **27/6/2014.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບັນດາໜ່ວຍຮາກຖານທີ່ຂຶ້ນກັບ 3 ອົງການຈັດຕັ້ງມະຫາຊົນ ທຫລ ເພື່ອໃຫ້ສະມາຊິກຂອງຕົນປະກອບສ່ວນຕາມແຈ້ງການນີ້ດ້ວຍ.

**ປະທານກຳມະບານຮາກຖານ ທຫລ**

ແສງເພັດ ດວງພິລາ

ຮຽນ ສະຫາຍ ... ສະມາຊິກກຳມະບານ ... ປະກອບສ່ວນ ... ດ້ວຍ.

17/6/2014

ບຸນລັງ ...